ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 567 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.09.2021

# ດໍາລັດ
# ວ່າດ້ວຍກອງທຶນປົກປັກຮັກສາປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງ ກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0458/ກປ, ລົງວັນທີ13 ສິງຫາ 2021.

## ລັດຖະບານ ອອກດໍາລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ ກອງທຶນປົກປັກຮັກສາປ່າໄມ້ ເພື່ອສະສົມທຶນ ແລະ ລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ແນໃສ່ສະໜອງທຶນໃຫ້ແກ່ວຽກງານປ່າໄມ້ ໃຫ້ມີຄວາມຍືນຍົງ, ໂປ່ງໃສ ແລະ ສາມາດກວດສອບໄດ້ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກອງທຶນປົກປັກຮັກສາປ່າໄມ້**

ກອງທຶນປົກປັກຮັກສາປ່າໄມ້ ຂຽນຫຍໍ້ວ່າ "ກປປ" ເປັນພາສາອັງກິດວ່າ "Forest Protection Fund-FPF" ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອສະສົມທຶນ ແລະ ລະດົມທຶນ ຈາກແຫຼ່ງຕ່າງໆ ເພື່ອຮັບປະກັນ ໃຫ້ມີ ງົບປະມານ ພຽງພໍ, ຍືນຍົງ ແລະ ນໍາໃຊ້ເຂົ້າໃນວຽກງານປ່າໄມ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ຄ່າບູລະນະປ່າໄມ້** ໝາຍເຖິງ ຈໍານວນເງິນທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນກິດຈະການປ່າໄມ້ ຊຶ່ງຕ້ອງຈ່າຍໃຫ້ລັດ ຕາມອັດຕາທີ່ລັດໄດ້ກໍານົດ;

**2. ຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ** ໝາຍເຖິງ ຈໍານວນເງິນທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຊຶ່ງຕ້ອງຈ່າຍໃຫ້ລັດກ່ອນການຂຸດຄົ້ນ ຕາມອັດຕາທີ່ລັດໄດ້ກໍານົດ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນໍາໃຊ້ກອງທຶນປົກປັກຮັກສາປ່າໄມ້**

ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນປົກປັກຮັກສາປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;

2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;

3. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີ ຂອງຄັງເງິນແຫ່ງຊາດ, ລົງບັນຊີ ຕາມຫຼັກການ ແລະ ລະບຽບການພື້ນຖານ ການບັນຊີແຫ່ງລັດ;

4. ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທໍາ ແລະ ໂປ່ງໃສ, ຮັບປະກັນລາຍຈ່າຍ ຕາມແຜນການປະຈໍາແຕ່ລະປີ;

5. ມີການກວດກາ ແລະ ກວດສອບເປັນປົກກະຕິ ຕາມກົດໝາຍ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນໍາໃຊ້ກອງທຶນ ປົກປັກຮັກສາປ່າໄມ້

**ມາດຕາ 5 ແຫຼ່ງລາຍຮັບ ຂອງກອງທຶນ**

ແຫຼ່ງລາຍຮັບຂອງ ກປປ ຕົ້ນຕໍ ມີ ດັ່ງນີ້:

1. ງົບປະມານຂອງລັດ ຕາມການຈັດສັນງົບປະມານປະຈໍາປີ;

2. ຄ່າບູລະນະປ່າໄມ້ ຫຼື ຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ;

3. ຊາວສ່ວນຮ້ອຍ ຈາກລາຍຮັບ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກເຂດທັນປຽນທີ່ດິນປ່າໄມ້;

4. ສາມສິບສ່ວນຮ້ອຍ ຈາກລາຍຮັບ ຂອງການຂາຍໄມ້ ທີ່ຂຸດຄົ້ນຈາກປ່າຜະລິດ;

5. ຊາວສ່ວນຮ້ອຍ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ

6. ສິບສ່ວນຮ້ອຍ ຈາກລາຍຮັບ ຂອງການທັນປຽນທີ່ດິນປ່າໄມ້ ໄປຮັບໃຊ້ເປົ້າໝາຍອື່ນ;

7. ຊາວສ່ວນຮ້ອຍ ຈາກລາຍຮັບ ຂອງການດໍາເນີນກິດຈະການທ່ອງທ່ຽວທໍາມະຊາດ ແລະ ອື່ນໆ;

8. ເກົ້າສິບສ່ວນຮ້ອຍ ຈາກລາຍຮັບ ຂອງການຄ້າຂາຍກາກບອນປ່າໄມ້;

9. ຊາວສ່ວນຮ້ອຍ ຈາກລາຍຮັບຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

10. ການຊ່ວຍເຫຼືອ ຂອງ ອົງການຈັດຕັ້ງ ແລະ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;

11. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

12. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 6 ການນຳໃຊ້ກອງທຶນ**

ກອງທຶນປົກປັກຮັກສາປ່າໄມ້ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ປ່າໄມ້ ແລະ ທີ່ດິນປ່າໄມ້;

3. ຝຶກອົບຮົມ ວິຊາການກ່ຽວກັບວຽກງານປ່າໄມ້;

4. ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ປົກປັກຮັກສາ ແລະ ພັດທະນາປ່າໄມ້;

5. ປະຕິບັດ ແຜນງານ, ໂຄງການ, ຕິດຕາມກວດກາ ແລະ ແກ້ໄຂ ບັນຫາວຽກງານປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ;

6. ປົກປັກຮັກສາ ແລະ ພັດທະນາປ່າປ້ອງກັນ, ປ່າສະຫງວນ, ອຸທິຍານແຫ່ງຊາດ, ປ່າຜະລິດ ແລະ ຄຸ້ມຄອງປ່າໄມ້ຂັ້ນບ້ານ ລວມທັງການພັດທະນາບ້ານ ຫຼື ກຸ່ມບ້ານທີ່ເປັນຄູ່ສັນຍາຮ່ວມການຄຸ້ມຄອງປ່າຜະລິດ;

7. ປູກໄມ້ ແລະ ຟື້ນຟູປ່າ ເພື່ອເປົ້າໝາຍທາງດ້ານເສດຖະກິດ ແລະ ປົກປັກຮັກສາສິ່ງແວດລ້ອມ;

8. ວຽກງານຄຸ້ມຄອງ ບໍລິຫານກອງທຶນ;

9. ການປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີ ໃນວຽກງານ ຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູບູລະນະປ່າໄມ້.

**ມາດຕາ 7 ການຖອນເງິນ**

ການຖອນເງິນອອກຈາກບັນຊີເງິນຝາກຂອງ ກປປ ຢູ່ຄັງເງິນແຫ່ງຊາດ ຕ້ອງປະຕິບັດຕາມ ແຜນການ, ແຜນງານ, ໂຄງການ ທີ່ຖືກຮັບຮອງໂດຍ ສະພາບໍລິຫານ ກປປ ແລະ ຖືກຕ້ອງຕາມລະບຽບການຂອງກອງທຶນ ແລະ ລະບຽບການ ຂອງກະຊວງການເງິນ. ການຖອນເງິນ ຂອງ ກປປ ແຕ່ລະຄັ້ງ ຕ້ອງຖອນດ້ວຍແຊກ ທີ່ມີລາຍເຊັນ ຂອງຜູ້ທີ່ໄດ້ຮັບມອບສິດຈາກສະພາບໍລິຫານ ກປປ.

ການອະນຸຍາດຖອນເງິນອອກຈາກບັນຊີເງິນຝາກ ຂອງກອງທຶນ ບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນ ໃນແຕ່ລະປີງົບປະມານ.

ການຖອນເງິນກອງທຶນ ບໍ່ສາມາດຖອນໄດ້ໝົດ ແລະ ຕ້ອງຮັກສາໄວ້ ສາມສິບ ສ່ວນຮ້ອຍ ໃນບັນຊີເງິນຝາກ ຂອງກອງທຶນ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນ

**ມາດຕາ 8 ໂຄງປະກອບການຈັດຕັ້ງຂອງກອງທຶນ**

ການຈັດຕັ້ງຂອງກອງທຶນປົກປັກຮັກສາປ່າໄມ້ ປະກອບດ້ວຍ:

1. ສະພາບໍລິຫານ ກປປ;

2. ກອງເລຂາ.

**ມາດຕາ 9 ສະພາບໍລິຫານ ກປປ**

ສະພາບໍລິຫານ ກປປ ແມ່ນ ການຈັດຕັ້ງສູງສຸດຂອງກອງທຶນ ຮັບຜິດຊອບເຄື່ອນໄຫວວຽກງານກອງທຶນ.

ສະພາບໍລິຫານກອງທຶນ ເປັນການຈັດຕັ້ງໜຶ່ງທີ່ບໍ່ປະຈໍາການ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ກໍາມະການ ຈໍານວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ, ຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້. ສະພາບໍລິຫານກອງທຶນ ມີອາຍຸການ ຫ້າ ປີ.

**ມາດຕາ 10 ໂຄງປະກອບບຸກຄະລະກອນຂອງສະພາບໍລິຫານ ກປປ**

ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານ ກອງທຶນປົກປັກຮັກສາປ່າໄມ້ ປະກອບດ້ວຍ:

1. ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ເປັນຮອງປະທານ, ທັງເປັນຜູ້ປະຈໍາການ;
3. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນກໍາມະການ;
5. ຮອງລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນກໍາມະການ;
6. ຮອງລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນກໍາມະການ;
7. ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນກໍາມະການ;
8. ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນກໍາມະການ;
9. ຫົວໜ້າກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ ເປັນກໍາມະການ, ທັງເປັນຫົວໜ້າກອງເລຂາ.

ໂຄງປະກອບບຸກຄະລາກອນ ຂອງ ສະພາບໍລິຫານ ກປປ ສາມາດປັບປຸງ, ປ່ຽນແປງໄດ້ ຕາມຄວາມຈໍາເປັນ ໂດຍການຕົກລົງ ຂອງນາຍົກລັດຖະມົນຕີ.

ບຸກຄະລາກອນ ຂອງສະພາບໍລິຫານ ກປປ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານຈາກ ກປປ ໃນການປະຕິບັດໜ້າທີ່ຂອງຕົນ. ສໍາລັບ ເບ້ຍປະຊຸມ ແລະ ຄ່າສິ້ນເປືອງຕ່າງໆຂອງກອງປະຊຸມ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງການເງິນ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງ ສະພາບໍລິຫານ ກປປ**

ສະພາບໍລິຫານ ກອງທຶນປົກປັກຮັກສາປ່າໄມ້ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ, ການນໍາໃຊ້ກອງທຶນ;
2. ຄຸ້ມຄອງບໍລິຫານ ກອງທຶນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການຂອງກອງທຶນ;
3. ພິຈາລະນາຮັບຮອງ ແຜນງານ, ແຜນການ ຫ້າ ປີ, ແຜນການເຄື່ອນໄຫວປະຈໍາປີ, ບົດສະຫຼຸບລາຍງານການເຄື່ອນໄຫວວຽກງານ ຂອງ ກປປ, ບົດລາຍງານວິຊາການ ແລະ ການເງິນ, ແຜນແບ່ງປັນງົບປະມານປະຈໍາປີຂອງ ກປປ;
4. ຊີ້ນໍາ-ນໍາພາ ການເຄື່ອນໄຫວ ຂອງ ກປປ;
5. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ກອງທຶນ;
6. ຊີ້ນໍາ, ຊຸກຍູ້ ການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍຂອງ ກປປ;
7. ສະເໜີ ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ບຸກຄະລາກອນຂອງກອງເລຂາ ກປປ;

8. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

9. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງ ກປປ;

10. ສະຫຼຸບລາຍງານ ກ່ຽວກັບ ການເຄື່ອນໄຫວວຽກງານ ຂອງ ກປປ ຕໍ່ລັດຖະບານ ໃນແຕ່ລະໄລຍະ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 12 ກອງປະຊຸມສະພາບໍລິຫານ ກປປ**

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈັດຂຶ້ນປີລະສອງເທື່ອ, ໃນກໍລະນີມີບັນຫາສຳຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມ ຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ ສອງ ຄົນຂຶ້ນໄປ. ກອງປະຊຸມ ຈະເປີດໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ.

**ມາດຕາ 13 ກອງເລຂາ ກປປ**

ກອງເລຂາກອງທຶນປົກປັກຮັກສາປ່າໄມ້ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ໜຶ່ງ ຫາ ສອງ ຄົນ ທີ່ເປັນຮອງ ຫົວໜ້າກົມປ່າໄມ້ ແລະ ພະນັກງານຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງສະພາບໍລິຫານກອງທຶນປົກປັກຮັກສາປ່າໄມ້.

ຫົວໜ້າກອງເລຂາ ມີຄວາມຮັບຜິດຊອບໂດຍກົງ ຕໍ່ສະພາບໍລິຫານ ກ່ຽວກັບວຽກງານຄຸ້ມຄອງບໍລິຫານ ກປປ, ຮອງຫົວໜ້າກອງເລຂາ ເປັນຜູ້ຊ່ວຍຫົວໜ້າກອງເລຂາ ແລະ ມີໜ້າທີ່ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກອງເລຂາ.

**ມາດຕາ 14 ສິດ ແລະ ໜ້າທີ່ ກອງເລຂາ ກປປ**

ກອງເລຂາ ກອງທຶນປົກປັກຮັກສາປ່າໄມ້ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນ ປະຈຳ ທຸກ ເດືອນ ແລະ ປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາ ຮັບຮອງ;

2. ຄົ້ນຄວ້າ, ສ້າງ ລະບຽບການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ກອງທຶນ ສະເໜີຕໍ່ສະພາບໍລິຫານ;

3. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນໃຫ້ສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

4. ຊຸກຍູ້ ຂະແໜງການກະສິກຳ ແລະ ປ່າໄມ້ຂັ້ນທ້ອງຖິ່ນ ຕິດຕາມການເກັບລາຍຮັບ ເຂົ້າ ກປປ ໃຫ້ສອດຄ່ອງກັບລະບຽບການ;

5. ຈັດຕັ້ງກິດຈະກຳຊອກຫາແຫຼ່ງທຶນເພື່ອລະດົມທຶນ ເຂົ້າກອງທຶນ;

6. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນ;

7. ເບີກຈ່າຍເງິນ, ວັດຖຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການທີ່ສະພາບໍລິຫານກອງທຶນຮັບຮອງ;

8. ຕິດຕາມ, ກວດກາປະເມີນຜົນການນຳໃຊ້ກອງທຶນ;

9. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງສະພາບໍລິຫານ.

## ໝວດທີ 4
## ການເປີດບັນຊີ, ການກວດສອບ ແລະ ການລາຍງານ

**ມາດຕາ 15 ການເປີດບັນຊີ**

ກອງທຶນປົກປັກຮັກສາປ່າໄມ້ ຕ້ອງເປີດບັນຊີເງິນຝາກໃນລະບົບຄັງເງິນແຫ່ງຊາດ ໃນກໍລະນີມີຄວາມຈຳເປັນ ຈຶ່ງອະນຸຍາດໃຫ້ເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດຢູ່ ສປປ ລາວ.

**ມາດຕາ 16 ການກວດສອບ**

ກອງທຶນປົກປັກຮັກສາປ່າໄມ້ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອີງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະຫຼະ. ໃນກໍລະນີຫາກພົບເຫັນວ່າມີການກະທຳຜິດ, ຜູ້ທີ່ກະທຳຜິດ ຕ້ອງຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 17 ການລາຍງານ**

ກອງເລຂາ ກປປ ຕ້ອງສັ່ງບົດລາຍງານການເຄື່ອນໄຫວຂອງກອງທຶນ ປະຈຳ ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈຳປີ ໃຫ້ສະພາບໍລິຫານ ຢ່າງເປັນປົກກະຕິ.

## ໝວດທີ 5
## ການກວດກາກອງທຶນ

**ມາດຕາ 18 ການກວດກາ**

ການກວດກາ ແມ່ນການປະເມີນຜົນການນຳໃຊ້ກອງທຶນ ໂດຍສະພາບໍລິຫານ ກປປ ແລະ ອີງການກວດກາ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ເນື້ອໃນການກວດກາ ກປປ**

ການກວດກາກອງທຶນປົກປັກຮັກສາປ່າໄມ້ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ກ່ຽວກັບກອງທຶນ;

2. ແຫຼ່ງລາຍຮັບຂອງກອງທຶນ, ແຜນລາຍຈ່າຍການຈັດຕັ້ງປະຕິບັດ ແລະ ງົບປະມານຄຸ້ມຄອງບໍລິຫານກອງທຶນ;

3. ການຈັດຕັ້ງປະຕິບັດວຽກງານຂອງພະນັກງານກອງເລຂາ ກປປ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 20 ຮູບການການກວດກາ**

ການກວດກາກອງທຶນປົກປັກຮັກສາປ່າໄມ້ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນ

ປະຈຳ ແລະ ມີ ກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 21 ເຄື່ອງໝາຍ ແລະ ຕາປະທັບ**

ກອງທຶນປົກປັກຮັກສາປ່າໄມ້ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 22 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ດຳລັດ ສະບັບນີ້ ປ່ຽນແທນດຳລັດວ່າດ້ວຍກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສະບັບເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005.

**ຕາງໜ້າ ລັດຖະບານ ແຫ່ງ ສປ ລາວ**
**ນາຍົກລັດຖະມົນຕີ**

ບົວສອນ ບຸບຜາວັນ